# ພະຍາດໃບດ່າງ ຂອງມັນຕົ້ນ

## Cassava mosaic virus (CMV)

ພະຍາດໃບດ່າງຂອງມັນຕົ້ນແມ່ນພະຍາດໜຶ່ງທີ່ເກີດຈາກເຊື້ອໄວຣັດ ທີ່ມີຜົນກະທົບຕໍ່ການປູກມັນຕົ້ນ, ໃນປະຈຸບັນມີລາຍງານທັງໝົດ 10 ຊະນິດ, ໃນນັ້ນພົບຢູ່ທະວີບ ອາຟຣິກາ 8 ຊະນິດ ແລະ ພົບຢູ່ທະວີບ ອາຊີ 2 ຊະນິດເຊັ່ນ: Indian cassava mosaic virus (ICMV) ພົບຢູ່ປະເທດອິນເດຍ ແລະ Sri Lankan cassava mosaic virus (SLCMV) ພົບຢູ່ປະເທດສີລັງກາ, ອິນເດຍ, ຫວຽດນາມ, ກຳປູເຈຍ ແລະ ໄທ. ສຳລັບປະເທດລາວພົບຄັ້ງທຳອິດຢູ່ ບ້ານ ບຶງງາມ, ເມືອງ ໂຂງ, ແຂວງ ຈຳປາສັກ. ຖ້າພະຍາດໃບດ່າງລະບາດຢ່າງຮຸນແຮງໃນຊ່ວງໄລຍະ 2 ເດືອນທຳອິດ ຈະສົ່ງຜົນເຮັດໃຫ້ມັນຕົ້ນບໍ່ສ້າງຫົວ, ຫົວນ້ອຍ-ລີບ ແລະ ຜະລິດແປ້ງໜ້ອຍເຮັດໃຫ້ຜົນຜະລິດຫລຸດລົງ 80-100% (ດັ່ງຮູບທີ 1)



ມັນຕົ້ນປົກກະຕິ     ມັນຕົ້ນເປັນພະຍາດ

ຮູບທີ 1: ຄວາມແຕກຕ່າງລະຫວ່າງຫົວມັນຕົ້ນຂອງຕົ້ນທີ່ເປັນພະຍາດ ແລະ ຫົວຂອງຕົ້ນທີ່ປົກກະຕິ



ໃບມັນຕົ້ນປົກກະຕິ     ອາການພະຍາດໃບດ່າງ

ຮູບທີ 2: ຄວາມແຕກຕ່າງລະຫວ່າງໃບມັນຕົ້ນທີ່ປົກກະຕິ ແລະ ໃບມັນຕົ້ນທີ່ເປັນພະຍາດ

## ການແຜ່ລະບາດ

**ແມງພາຫະ (Vector)**
**ແມງຫວີ່ຂາວ (Whitefly)**
**ຊື່ວິທະຍາສາດ: *Bemisia tabaci***



ໄລຍະດັກແດ້     ໄລຍະໂຕແກ່

ຮູບທີ 3: ແມງຫວີ່ຂາວໄລຍະດັກແດ້ ແລະ ໄລຍະໂຕແກ່

ຕິດໄປນຳທ່ອນພັນ ຫຼື ແນວພັນ



ຮູບທີ 4: ທ່ອນພັນມັນຕົ້ນ

## ລັກສະນະອາການຂອງພະຍາດໃບດ່າງມັນຕົ້ນ

ລັກສະນະອາການພະຍາດຢູ່ໃບ ມີລັກສະນະໃບດ່າງ, ໃບກູດງໍ ເຮັດໃຫ້ໃບເສຍຮູບຊົງ. ອາການໃບດ່າງມີຫລາຍແບບເຊັ່ນ: ໃບດ່າງຂຽວສະຫລັບຂຽວເຂັ້ມ ແລະ ໃບດ່າງເຫລືອງສະຫລັບຂຽວ, ໃບອ່ອນມີຂະໜາດນ້ອຍລົງ, ຕົ້ນເຕ້ຍ, ຢູ່ສ່ວນຍອດຈະເຫັນໃບດ່າງເຫລືອງສະຫລັບຂຽວຢ່າງຊັດເຈນ ແຕ່ໃບລຸ່ມຍັງປົກກະຕິ ເນື່ອງຈາກໄດ້ຮັບການຖ່າຍທອດພະຍາດຈາກແມງຫວີ່ຂາວຢາສູບ ທີ່ມີເຊື້ອໄວຣັດໃບດ່າງມັນຕົ້ນຈຶ່ງສະແດງອາການຈາກສ່ວນຍອດລົງມາສູ່ໃບລຸ່ມຂອງຕົ້ນ.

## ພືດອາໄສ

**ພືດອາໄສຂອງເຊື້ອໄວຣັດສາເຫດຂອງພະຍາດໃບດ່າງ**
ມັນຕົ້ນ, ໝາກຫຸ່ງສາ, ໝາກເຍົາ ແລະ ພືດຕະກຸນຕົ້ນເປົ້າ
**ພືດອາໄສຂອງແມງຫວີ່ຂາວ**
ພືດຕະກຸນຖົ່ວ, ຕະກຸນແຕງ, ຕະກຸນໝາກເລັ່ນ, ຜັກກະເພົາ, ຜັກບົວລະພາ, ຫອມປ້ອມ, ຫອມລາບ ແລະ ຜັກອີ່ຕູ່

## ການເຝົ້າລະວັງ ແລະ ປ້ອງກັນທ່ອນພັນຕິດພະຍາດ

1. ຕ້ອງໝັ່ນຕິດຕາມ ແລະ ກວດສວນປູກຕັ້ງແຕ່ເລີ່ມປູກທຸກໆ 2 ອາທິດ ຫາກພົບອາການທີ່ຄ້າຍໃບດ່າງ, ໃບກູດງໍ ໃຫ້ແຈ້ງພະນັກງານເມືອງ, ແຂວງ ແລະ ພະນັກງານສູນປ້ອງກັນພືດ.
2. ໃຫ້ທຳລາຍສວນມັນຕົ້ນທີ່ເປັນພະຍາດໃບດ່າງທັງໝົດໃນຂອບເຂດວົງກວ້າງ 1 ກມ.
3. ຫ້າມບໍ່ໃຫ້ມີການເຄື່ອນຍ້າຍທ່ອນພັນມັນຕົ້ນ ແລະ ທຸກຊິ້ນສ່ວນຂອງມັນຕົ້ນອອກຈາກສວນຢ່າງເດັດຂາດ.
4. ສຳລັບແມງພາຫະ:
   - ການຄວບຄຸມດ້ວຍວິທີຊີວະວິທະຍາ ສາມາດໃຊ້ ແມງຊ້າງປີກໃສ, ໂຕຫ້ຳແຕນບຽນ ແລະ ເຊື້ອລາ ບູເວີເລຍ
   - ການຄວບຄຸມດ້ວຍສານເຄມີ ນຳໃຊ້ imidacloprid 70% WG ອັດຕາ 12 ກຼາມ ຕໍ່ນ້ຳ 20 ລິດ.

### ເອກະສານອ້າງອີງ


- ເຝົ້າລະວັງພະຍາດໃບດ່າງມັນຕົ້ນ. ກຸ່ມວິໄຈການກັກກັນພືດ, ກົມວິຊາການກະເສດ, ປະເທດໄທ. 2019.
- ບົດລາຍງານການວິໄຈ ແລະ ການສຳຫລວດພະຍາດໃບດ່າງມັນຕົ້ນ. ສູນປ້ອງກັນພືດ, ກົມປູກຝັງ. 2020.



ສູນປ້ອງກັນພືດ, ກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້
Km 13, ຖະໜົນທ່າເດື່ອ, ບ້ານ ນາໄຫ, ເມືອງ ຫາດຊາຍຟອງ, ນະຄອນຫຼວງວຽງຈັນ
ໂທ/ແຟກ: +856 21 812164